# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 28 ມັງກອນ 2007 ( 1-28-2007)

---

## ແມ່ນຫຍັງເປັນຄວາມຫວັງຂອງສັງຄົມ:

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 11:1-9; ສຸພາສິດ 28:2-5, 29:2-4

**ຄວາມຈິງໃນພຣະຄັມພີ:** ມະນຸດເຮັດໃຫ້ພຣະເຈົ້າຊອບພຣະທັຍ ແລະໃຫ້ສັງຄົມເຂັ້ມແຂງໃນເມື່ອພວກເຂົາໄດ້ເອົາພຣະເຈົ້າ ແລະທົນທາງຂອງພຣະອົງເປັນສູນກາງໃນຊີວິດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ມີຊີວິດຢູ່ຕາມຫລັກຄຳສອນຂອງພຣະຄັມພີ.

- ຊອກຫາຜົນປໂຍດກຳໄລທີ່ມີຊີວິດຢູ່ດ້ວຍເອົາຫລັກການມາຕຖານຂອງພຣະເຈົ້າມາໃຊ້.
- ບອກວິທີການທີ່ທ່ານຈະຊ່ອຍໝູ່ບ້ານຂອງທ່ານໃຫ້ຍຶດຖືຫລັກການມາຕຖານຂອງພຣະເຈົ້າ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນຳ:

1. ໃຫ້ນັກຮຽນບອກຊື່ຜູ້ທີ່ເຫລື້ອມໃສສັດທາໃນພຣະເຈົ້າໃນໂລກທຸກມື້ນີ້, ໃຫ້ນັກຮຽນຍົກຕົວຢ່າງຂອງຄວາມຊົ່ວຮ້າຍ ແລະການບໍ່ເຊື່ອຟັງທີ່ມີຢູ່ໃນການດຳເນີນຊີວິດຢູ່ໃນສັງຄົມ.
2. **ຄຳຖາມ:** (1) ທ່ານຈະໃຫ້ຄະແນນຄວາມຫວັງຂອງທ່ານໃນລະດັບ 1 ເຖິງ 10, ສຳລັບກຸ່ມຄົນໃນຄຸ້ມ, ໃນປະເທດແລະໃນໂລກທີ່ດຳເນີນຊີວິດໃນພື້ນຖານດີໃນລະດັບໃດ? (2) ພວກເຮົາຈະສາມາດເປັນຕົວແທນປ່ຽນສັງຄົມແລະໂລກໃຫ້ດີຂື້ນໄດ້ຢ່າງໃດ? (3) ຄົນຜູ້ດຽວສາມາດເຮັດໄດ້ບໍ່?
3. ແມ່ນຫຍັງຄືການທ້າທາຍທີ່ຍິ່ງໃຫຍ່ຂອງຄຣິສຕຽນທີ່ກຳລັງປະເຊີນໃນຄວາມພະຍາຍາມໃຫ້ຄວາມສັດທາໃນພຣະເຈົ້າມີຜົນສະທ້ອນອັນດີໃຫ້ກັບສັງຄົມ?

**1. ສແວງຫາຊື່ສຽງທີ່ຖືກຕ້ອງ:** ( ປະຖົມມະການ 11:1-4)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ 11:1-4

2) **ອະທິບາຍ:** ແຜນການຂອງພວກເຮົາບໍ່ວ່າໂດຍສ່ວນຕົວຫລືສ່ວນລວມນັ້ນຄວນຊັ່ງຊາໃສ່ກັບພຣະປະສົງຂອງພຣະເຈົ້າ ແລະນໍ້າພຣະທັຍຂອງພຣະອົງ, ບໍ່ຄວນໃຫ້ຄວາມເຫັນແກ່ຕົວແລະຄວາມຢ້ານກົວທີ່ບໍ່ຈຳເປັນເປັນຕົວຜັກດັນເຮົາ.

3) **ຄຳຖາມ:** (1) ແມ່ນຫຍັງເປັນແຮງດົນໃຈທີ່ຢູ່ເບື້ອງຫລັງທີ່ຢາກໃຫ້ພວກເຮົາສ້າງຊື່ສຽງຂອງເຮົາເອງຂຶ້ນມາເອງ? (2) ບັນຫານີ້ເປັນແນວໃດໃນທຸກມື້ນີ້?

4) **ຄຳຖາມ:** (1) ຄວາມເປັນນໍ້າໜຶ່ງໃຈດຽວກັນໃນພຣະຄຣິດ ແຕກຕ່າງກັນກັບຄວາມເປັນນໍ້າໜຶ່ງໃຈດຽວກັນທີ່ຫໍບາເບລ ຢ່າງໃດ? ( 2) ທ່ານຈະສ້າງຄວາມເປັນນໍ້າໜຶ່ງໃຈດຽວກັນກັບຄົນອື່ນ ໆຢ່າງໃດ?

5) ແນະນຳໃຫ້ນັກຮຽນຊ່ອຍກັນຄິດເບິ່ງວ່າ ເຂົາເຈົ້າຈະສ້າງຄວາມເປັນນໍ້າໜຶ່ງໃຈດຽວກັນຢ່າງໃດໂດຍບໍ່ກ້າວກ່າຍຄົນອື່ນ, ຫລືໃຫ້ຄົນໃດຄົນນຶ່ງ, ກຸ່ມໃດກຸ່ມນຶ່ງ ໃຫຍ່ກວ່າຫລືສຳຄັນກວ່າພຣະເຈົ້າໃນຊີວິດຂອງເຂົາເຈົ້າ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** ປະຖົມມະການ 11:1-4

1. ເຫດຜົນ 3 ຢ່າງໃນການສ້າງຫໍບາເບລ ຂອງເຂົາເຈົ້າຄືແນວໃດແດ່ ? (ໃນຂໍ້ທີ 4 )
2. ເຂົາເຈົ້າຕັ້ງໃຈທີ່ຈະບໍ່ເຊື່ອຟັງພຣະເຈົ້າຢ່າງໃດ?
3. ຄົນເຮົາໃນສມັຍນີ້ຄ້າຍຄືກັນກັບຄົນໃນສມັຍນັ້ນຢ່າງໃດແດ່?
4. ຄົນທີ່ເຫີນຫ່າງອອກຈາກພຣະເຈົ້າມີຜົນສະທ້ອນອັນໃດຕໍ່ຄວາມສັມພັນກັບຄົນອື່ນ?

**2. ຈົດຈໍ່ເບິ່ງຈຸດປະສົງຂອງພຣະເຈົ້າ:** ( ປະຖົມມະການ 11:5-9)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ປະຖົມມະການ 11:5-9

2) **ອະທິບາຍ:** ພຣະເຈົ້າສັງເກດເຫັນແຜນການອັນຈອງຫອງຂອງເຂົາໃນການສ້າງຫໍບາເບລ ພຣະອົງຈຶ່ງຊົງເຮັດໃຫ້ເຂົາສັບສົນໃນພາສາປາກເວົ້າຂອງເຂົາ (ປ່ຽນພາສາໃຫ້ເຂົາເວົ້າແຕກຕ່າງກັນ ) ໂດຍບໍ່ໃຫ້ເຂົາເຂົ້າໃຈຄຳເວົ້າຂອງກັນ. ການສ້າງຫໍບາເບລຈຶ່ງຍຸຕິລົງ ແລະເຂົາກໍແຕກກະຈະກະຈາຍກັນໄປຢູ່ຄົນລະແຫ່ງລະທີ່.

3) **ຄຳຖາມ:** ທ່ານມີທ່າທີຕໍ່ການເຂົ້າມາຂັດຂວາງຂອງພຣະເຈົ້າ(ໃນການສ້າງຫໍບາເບລ) ແນວໃດ?

4) **ອະທິບາຍ:** ເຮົາໄດ້ນຳ(ເຊີນ)ການພິພາກສາເຂົ້າມາສູ່ຊີວິດເຮົາແລະສັງຄົມທີ່ເຮົາຢູ່ ເມື່ອເຮົາໃຊ້ຄວາມສາມາດທີ່ພຣະເຈົ້າປະທານໃຫ້ໃນທາງທີ່ຜິດແລະຄົນໃນສັງຄົມບໍ່ດຳເນີນຊີວິດຕາມພຣະປະສົງຂອງພຣະເຈົ້າ. ຊີວິດການເປັນຢູ່ຂອງພວກເຮົາຈະມີຄວາມແຕກຕ່າງຖ້າເຮົາຈົດຈໍ່ເບິ່ງຈຸດປະສົງຂອງພຣະເຈົ້າ ແລະເຊື່ອຟັງພຣະອົງ.

5) **ຄຳຖາມ:** ແມ່ນຫຍັງຄືຄວາມຮັບຜິດຊອບຂອງຄຣິສຕຽນໃນສມັຍທຸກມື້ນີ້ ທີ່ຈະປະກາດຂ່າວປະເສີດໄປສູ່ປະຊາຊົນເມືອງຊີນາ (ອີຣັກ)?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ປະຖົມມະການ 11:5-9

1. ທ່ານຄິດວ່າການສະເດັດມາຂອງພຣະເຈົ້າ ໃນຂໍ້ 5 ນັ້ນມີຄວາມໝາຍແນວໃດ?
2. ພຣະເຈົ້າມີຄວາມກ່ຽວພັນກັບໂລກໃນສມັຍທຸກມື້ນີ້ແນວໃດ?
3. ມີທາງໃດແດ່ທີ່ພວກເຮົາມີປະສົບການໃນການຕິດຕໍ່ພົວພັນກັນ ?
4. ດົນນານປານໃດແລ້ວທີ່ຄວາມສັບສົນວຸ້ນວາຍໄດ້ນຳທ່ານກັບຄືນມາຫາພຣະເຈົ້າ?

**3. ຊ່ອຍສ້າງມາຕຖານຂອງພຣະເຈົ້າຂຶ້ນ:** ( ສຸພາສິດ 28:2-5, 29:2-4)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ສຸພາສິດ 28:2-5, 29:2-4

2) ຂຽນຄຳວ່າ " ມາຕຖານໃນພຣະເຈົ້າ " ແລະບໍ່ມີມາຕະຖານໃນພຣະເຈົ້າ " ໃສ່ກະດານ, ເຮັດເປັນສອງຄໍລັມ. ເອົາຂໍ້ຄວາມນີ້ໃນພຣະຂໍ້ພຣະຄັມພີມາສົນທະນາກັນ ແລ້ວຂຽນຖ້ອຍຄຳທີ່ສອດຄ່ອງກັບແຕ່ລະຄໍລັມ ໃສ່ທາງກ້ອງສອງຄໍລັມນີ້.

3) **ສົນທະນາ** ເຣື່ອງອິດທິພົນແລະມາຕຖານຂອງສັງຄົມທີ່ຍອມເຊື່ອຟັງພຣະເຈົ້າແລະຜູ້ທີ່ບໍ່ນັບຖືພຣະເຈົ້າ ເພື່ອໃຫ້ເຂົ້າໃຈ

ແຈ້ງຂື້ນ.

4) ແລກປ່ຽນຄວາມຄິດເຫັນເຣື່ອງຣິດອຳນາດແລະການຊົງສະຖິດຢູ່ນຳຂອງພຣະວິນຍານບໍຣິສຸດ ເມື່ອເຮົາເອົາໃຈຈົດຈໍ່ໃສ່ພຣະປະສົງຂອງພຣະເຈົ້າ.

5) **ອະທິບາຍ:** ເຖິງແມ່ນວ່າຄວາມແຕກຕ່າງຂອງຄົນແລະກຸ່ມຄົນ ລວງທັງບັນຫາດ້ານພາສາ ຜູ້ທີ່ເຊື່ອໃນພຣະຄຣິດສາມາດຕິດຕໍ່ພົວພັນແລະມີຄວາມເປັນນໍ້ານຶ່ງໃຈດຽວກັນ ໃນຖານະທີ່ເປັນອະວັຍຍະວະໃນພຣະກາຍຂອງພຣະຄຣິດ.

6) ໃນຖານະທີ່ເຮົາເປັນຜູ້ທີ່ເຊື່ອ ເຮົາມີຄວາມຮັບຜິດຊອບໃນການປະກາດພຣະຄຣິດໄປສູ່ທຸກຄົນ ເພື່ອເຂົາເຈົ້າຈະໄດ້ຮູ້ຈັກພຣະເຈົ້າແລະຕິດຕາມພຣະອົງ.

7) **ຄຳຖາມ:** (1) ຄຣິສຕຽນຈະເປັນຜູ້ນຳສັງຄົມໄດ້ຢ່າງໃດ? (2) ຜູ້ທີ່ເຊື່ອໃນພຣະເຈົ້າຄວນຍຶດໝັ້ນແລະກ້າຫານທີ່ຈະຕອບໂຕ້ຜູ້ບໍ່ເຊື່ອຟັງກົດໝາຍຢ່າງໃດ? (3) ທາງໃດເປັນທາງທີ່ເຮັດໃຫ້ສັງຄົມເຂັ້ມແຂງກວ່າທາງອື່ນ? (4) ທ່ານຈະໃຫ້ມາຕຖານການເຊື່ອຟັງພຣະເຈົ້າສຳລັບຄອບຄົວທ່ານຢ່າງໃດ? (5) ຄຣິສຕຽນຈະຊ່ອຍໃຫ້ສັງຄົມມີຄວາມສຸກແລະແລະມີມາຕຖານຄວາມໝັ້ນຄົງຢ່າງໃດ? (6) ເຮົາຈະເຮັດໃຫ້ການເຊື່ອຟັງພຣະເຈົ້າສະທ້ອນຕໍ່ສັງຄົມໄດ້ຢ່າງໃດ? (7) ພວກເຮົາຄວນແບ່ງປັນຄວາມຫວັງກັບຊຸມຊົນໃນສັງຄົມດ້ວຍວິທີໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ສຸພາສິດ 28:2-5, 29:2-4

1. ໃຜເປັນຜູ້ຊົ່ວຮ້າຍແລະເປັນພັຍໃນສັງຄົມ, ແລະສິ່ງຜົນສະທ້ອນອັນໃດຕໍ່ຄົນອື່ນ?
2. ພວກເຮົາຈະຮັບຮູ້ແລະໃຫ້ການຍ້ອງຍໍຄົນຊອບທັມຢ່າງໃດ?
3. ເຮົາຈະຊ່ອຍສັງຄົມແລະໂລກໃຫ້ຍອມຮັບມາຕຖານຂອງພຣະເຈົ້າໃນທາງໃດ?
4. ທ່ານຈະຍຶດໝັ້ນໃນພຣະຄຣິດ ແລະມີອິດທິພົນຕໍ່ສັງຄົມໃນອາທິດນີ້ຢ່າງໃດ?

<u>**ສລູບ:**</u>

1. ຜູ້ທີ່ເຊື່ອຄວນເອົາໃຈໃສ່ເຣື່ອງຊື່ສຽງດີທີ່ພຣະເຈົ້າຊົງພໍພຣະທັຍສຳລັບສັງຄົມຂອງເຮົາ ແທນທີ່ຈະຫາຊື່ສຽງໃສ່ຕົນເອງ
2. ສັງຄົມທີ່ສັດທາໃນພຣະເຈົ້າ ຄວນຈະເອົາໃຈຈົດຈໍ່ໃນພຣະປະສົງແລະນໍ້າພຣະທັຍຂອງພຣະເຈົ້າ, ບໍ່ແມ່ນຄວາມເຫັນແກ່ຕົວ ແລະຄວາມສົນໃຈພິເສດຂອງຕົນເອງ.
3. ດ້ວຍການສແວງຫາພຣະເຈົ້າ ແລະນຳເອົາສະຕິປັນຍາທີ່ມາຈາກພຣະອົງມາໃຊ້ໃນການດຳເນີນຊີວິດ, ເຮົາຈະເປັນຜູ້ທີ່ຊ່ອຍເສີມສ້າງຄວາມໝັ້ນຄົງແລະຄວາມທ່ຽງທັມຂອງສັງຄົມ.
4. ອະທິຖານປິດ.

ອຸປຖັມໂດຍລາວຊາງເທີນບັບຕິສສັມພັນ, ຮຽບຮຽງໂດຍ J.H.